GCI

# ບົດທີ 3
# ການເປັນຜູ້ນໍາ

## ບົດນໍາ:

ວັດຖຸປະສົງໃນການສຶກສາ:

- ເພື່ອໃຫ້ເຂົ້າໃຈຄວາມຕ້ອງການສໍາລັບບຸກຄະລິກກະພາບໃນການເປັນຜູ້ນໍາ.
- ເພື່ອສຶກສາຄຸນລັກສະນະຕ່າງໆຂອງການເປັນຜູ້ນໍາ.
- ຮຽນຮູ້ເຄັດລັບການຍົກລະດັບການເປັນຜູ້ນໍາ.

## ໂຄງຮ່າງຂອງບົດຮຽນ

I. ຄວາມສໍາຄັນຂອງການເປັນຜູ້ນໍາ
   ກ. ການເປັນຜູ້ນໍາຄືອັນໃດ
   ຂ. ການເປັນຜູ້ນໍາຕ້ອງເຮັດເປັນແບບຢ່າງ
   ຄ. ການຊົງເອີ້ນໃຫ້ເປັນຜູ້ນໍາ
   ງ. ການຕຽມສໍາລັບເປັນຜູ້ນໍາ

II. ການເປັນຜູ້ນໍາ ແລະຊີວິດທີ່ບໍລິສຸດ
   ກ. ໃນຖານະທີ່ເປັນຜູ້ນໍາ ເຮົາຈະຕ້ອງມີຊີວິດທີ່ບໍລິສຸດ
   ຂ. ເຮົາຈະມີຊີວິດທີ່ບໍລິສຸດໄດ້ຢ່າງໃດ
   ຄ. ຕົວຢ່າງຂອງຜູ້ນໍາທັງຫລາຍທີ່ມີຊີວິດທີ່ອຸທິດຖວາຍແກ່ງານຂອງພະເຈົ້າ
   ງ. ສະຫລຸບ

III. ການເປັນຜູ້ນໍາ ແລະຄວາມຊອບທໍາ
   ກ. ວັດປະສົງຂອງການດໍາເນີນຊີວິດທີ່ຊອບທໍາ
   ຂ. ການຊົງອວຍພະພອນແກ່ຊີວິດຂອງຜູ້ນໍາທີ່ຊື່ສັດ
   ຄ. ຕົວຢ່າງຂອງຜູ້ນໍາທີ່ຊື່ສັດ
   ງ. ຕົວຢ່າງຂອງບຸກຄົນທີ່ບໍ່ໄດ້ດໍາເນີນໃນຄວາມຊື່ສັດ
   ຈ. ກຸນແຈສໍາຄັນສໍາລັບການມີຊີວິດທີ່ສັດຊື່

IV. ການເປັນຜູ້ນໍາ ແລະຄວາມສັດຊື່
   ກ. ອັກຄະສາວົກໂປໂລເປັນແບບຢ່າງຂອງຜູ້ນໍາທີ່ມີຄວາມສັດຊື່
   ຂ. ພະເຈົ້າຊົງສະແຫວງຫາຄວາມສັດຊື່ໃນການຮັບໃຊ້ຂອງເຮົາ
   ຄ. ເປັນຫຍັງບາງຄົນຈຶ່ງເລີກຮັບໃຊ້ກາງຄັນ
   ງ. ຜູ້ນໍາທີ່ມີຄວາມສັດຊື່ຕໍ່ພະເຈົ້າ ຈະເປັນແຫລ່ງກະຕຸ້ນໃຫ້ກໍາລັງໃຈແກ່ຜູ້ທີ່ຕິດຕາມ

V. ການເປັນຜູ້ນໍາ ແລະການຖ່ອມຕົວ
   ກ. ໂປໂລເປັນຜູ້ນໍາທີ່ຖ່ອມຕົວ
   ຂ. ສັນຍາລັກຂອງຄວາມຖ່ອມຕົວ
   ຄ. ປະໂຫຍດຂອງການເປັນຄົນຖ່ອມຕົວ

GCI

VI. ການເປັນຜູ້ນຳທີ່ຍອມຈຳນົນຕໍ່ພະເຈົ້າ
  ກ. ພະເຢຊູຄຣິດເປັນຕົວຢ່າງຂອງຜູ້ຮັບໃຊ້ທີ່ຍອມຈຳນົນ
  ຂ. ຕົວຢ່າງຂອງຜູ້ນຳທີ່ບໍ່ຍອມຈຳນົນຕໍ່ພະເຈົ້າ
  ຄ. ຕົວຢ່າງຂອງຜູ້ນຳທີ່ມີຊີວິດທີ່ຍອມຈຳນົນ
  ງ. ໂຄງສ້າງພື້ນຖານ 4 ປະການຂອງອຳນາດ
  ຈ. ພະເຈົ້າຊົງເປັນແມ່ພິມຂອງຜູ້ນຳ

VII. ຊີວິດໃນດ້ານອື່ນໆ ຂອງການເປັນຜູ້ນຳ
  ກ. ຜູ້ນຳກັບຊີວິດທີ່ອຸທິດ
  ຂ. ຜູ້ນຳກັບຊີວິດສ່ວນຕົວ
  ຄ. ຜູ້ນຳກັບຊີວິດໃນອົງກອນ

GCI

# I. ສິ່ງສຳຄັນສຳລັບການເປັນຜູ້ນຳ

## *ກ. ການເປັນຜູ້ນຳ ຄືອັນໃດ*

1. ການນຳຄື ຂະບວນການທີ່ມີ**<u>ອິດທິພົນ</u>**ຕໍ່ຄົນອື່ນໃຫ້ໄປເຖິງເປົ້າໝາຍທີ່ຜູ້ນຳໄດ້ຕັ້ງໄວ້

   ພະເຢຊູຄຣິດໃນຖານະຜູ້ນຳ ຊົງນຳເຮົາແລະສາມາດເຮັດໃຫ້ເຮົາເຊື່ອໝັ້ນທີ່ຈະຕິດຕາມພະອົງ ເມື່ອເຮົາຕິດຕາມພະອົງ ເຮັດໃຫ້ເຮົາເປັນເໝືອນພະອົງຍິ່ງຂຶ້ນ ນີ້ເປັນສິ່ງທີ່ເຮັດໃຫ້ພະປະສົງຂອງພະອົງສຳເລັດວັດຖຸປະສົງ

   ອີກປະການນຶ່ງຄື ເຮົາຈະຕ້ອງສ້າງສາວົກ ການທີ່ເຮົາເຊື່ອໝັ້ນໃນການຊົງນຳຂອງພະອົງ ເຮົາເຊື່ອຄຳສັ່ງສອນຂອງພະອົງໃນການສ້າງສາວົກ

2. ການນຳ ໝາຍເຖິງກິດຈະກຳທີ່ເປັນ**<u>ການຊີ້ບອກທາງ</u>** ໃຫ້ຄົນກຸ່ມໃດກຸ່ມນຶ່ງກ່ຽວກັບ**ເປົ້າໝາຍ**ຮ່ວມຂອງກຸ່ມ.

3. ຜູ້ນຳຈະຕ້ອງມີ**<u>ຜູ້ຕິດຕາມ</u>**
   ຜູ້ນຳທີ່ມີຄຸນສົມບັດຂອງການເປັນຜູ້ນຳຄົບຖ້ວນ ແຕ່ຖ້າບໍ່ມີຜູ້ຕາມ ເຂົາກໍບໍ່ແມ່ນຜູ້ນຳ.

## *ຂ. ການເປັນຜູ້ນຳຄືການເປັນແບບຢ່າງ.*

ຈອນ ກາຣເນີ ກ່າວເຖິງການເປັນຜູ້ນຳວ່າ "ຂະບວນການຊັກຈູງ ແລະເປັນແບບຢ່າງຂອງຜູ້ນຳ ມີອິດທິພົນຕໍ່ກຸ່ມທີ່ຈະປະຕິບັດຕາມວັດຖຸປະສົງຂອງຜູ້ນຳ ຫລືວັດຖຸປະສົງລວມຂອງກຸ່ມ"

ຜູ້ນຳຈະຕ້ອງບໍ່ **"<u>ເວົ້າ</u>"** ຜູ້ນຳຈະຕ້ອງ **"<u>ກ້າວໄປ</u>"** ຜູ້ນຳຈະຕ້ອງເຮັດເປັນແບບຢ່າງໃຫ້ຜູ້ຕິດຕາມປະຕິບັດຕາມ.

ຕົວຢ່າງ ຜູ້ຕິດຕາມ ທີ່ຕິດຕາມ.

**1 ໂກຣິນໂທ 11:1**

1. **<u>ພະເຢຊູຄຣິດ</u>**ໄດ້ຕັ້ງແບບຢ່າງໄວ້ໃຫ້ແກ່ເຮົາ 1 ເປໂຕ 2:21

   *ເພາະວ່າພະເຈົ້າໄດ້ຊົງເອີ້ນພວກທ່ານໄວ້ສຳລັບການນີ້ແຫລະ, ເພາະພະຄຣິດກໍໄດ້ຊົງທົນທຸກທໍຣະມານແທນທ່ານທັງຫລາຍເຫມືອນກັນ ໂດຍໃຫ້ເປັນແບບຢ່າງແກ່ພວກທ່ານ ເພື່ອພວກທ່ານຈະໄດ້ຕິດຕາມຮອຍພະບາດຂອງພະອົງ 1ເປໂຕ 2:21*

2. ເປໂຕຮຽກຮ້ອງໃຫ້**<u>ບັນດາເຖົ້າແກ່</u>**ເປັນແບບຢ່າງແກ່ຄົນອື່ນ
   1 ເປໂຕ 5:3
   *ບໍ່ແມ່ນເຫມືອນເປັນເຈົ້ານາຍເຫນືອພວກທີ່ຊົງຝາກໄວ້ກັບພວກທ່ານ ແຕ່ໃຫ້ເປັນແບບຢ່າງແກ່ຝູງແກະນັ້ນ*

GCI

## *ຄ. ການຊົງເອີ້ນເພື່ອເປັນຜູ້ນຳ*

ການເປັນຜູ້ນຳ ເປັນການຊົງເອີ້ນຈາກພະເຈົ້າ

*"ທ່ານທັງຫລາຍບໍ່ໄດ້ເລືອກເຮົາ ແຕ່ເຮົາໄດ້ເລືອກທ່ານທັງຫລາຍ ແລະໄດ້ແຕ່ງຕັ້ງທ່ານທັງຫລາຍໃຫ້ໄປເກີດຜົນ ແລະເພື່ອໃຫ້ຜົນຂອງທ່ານຄົງຢູ່ ເພື່ອວ່າເມື່ອທ່ານທັງຫລາຍທູນຂໍສິ່ງໃດຈາກພະບິດາໃນນາມຂອງເຮົາ ພະອົງຈະໄດ້ປະທານສິ່ງນັ້ນໃຫ້ແກ່ທ່ານ" ໂຢຮັນ 15:16*

1. ພະເຈົ້າຊົງເອີ້ນ**ອັບຣາມ**

   ປະຖົມມະການ 12:1-3

   *"ພະເຈົ້າກ່າວແກ່ອັບລາຣາມວ່າ "ເຈົ້າຈົ່ງອອກຈາກເມືອງ ຈາກຍາດພີ່ນ້ອງ ຈາກບ້ານບິດາຂອງເຈົ້າໄປຍັງດິນແດນທີ່ເຮົາຈະບອກໃຫ້ເຈົ້າຮູ້"*

   *"ເຮົາຈະໃຫ້ເຈົ້າເປັນຊົນຊາດໃຫຍ່ ເຮົາຈະອວຍພອນແກ່ເຈົ້າ ຈະໃຫ້ເຈົ້າມີຊື່ສຽງໃຫຍ່ໂຕເລື່ອງລືໄປ ແລ້ວເຈົ້າຈະຊ່ວຍໃຫ້ຜູ້ອື່ນໄດ້ຮັບພອນ"*

   *"ເຮົາຈະອຳນວຍພະພອນແກ່ຄົນທີ່ອວຍພອນເຈົ້າ ເຮົາຈະສາບແຊ່ງຄົນທີ່ແຊ່ງເຈົ້າ ບັນດາເຜົ່າພັນທົ່ວໂລກຈະໄດ້ ພະພອນເພາະເຈົ້າ"*

2. ພະເຈົ້າຊົງເອີ້ນ**ໂມເຊ**

   *"ຄັ້ນພະເຈົ້າທອດພະເນດເຫັນເຂົາຍ່າງເຂົ້າມາ ຈຶ່ງກ່າວອອກມາຈາກພຸ່ມໄມ້ນັ້ນວ່າ*
   *"ໂມເຊ ໂມເຊ ເອີຍ" ອົບພະຍົບ 3:4*

6. ພະເຈົ້າຊົງເອີ້ນ**ໂປໂລ**

   1 ໂກຣິນໂທ 1:1
   *"ໂປໂລ ຜູ້ທີ່ພະເຈົ້າຊົງເອີ້ນໄວ້ເປັນອັຄສາວົກຂອງພະເຢຊູຄຣິດ ຕາມນ້ຳພະໄທຂອງພະອົງ ກັບໂຊຊະເທນຜູ້ເປັນນ້ອງ"*

   ເຮົາຕ້ອງໝັ້ນໃຈວ່າ ຜູ້ນຳໄດ້ຮັບການຊົງເອີ້ນຈາກພະເຈົ້າແທ້ ບໍ່ແມ່ນໂດຍຕົວຂອງເຂົາເອງ
   ຕົວຢ່າງ: "ໂຄຣາໄດ້ນຳຄົນອິດສະຣາເອນກໍ່ການກະບົດ ເຂົາເລືອກຕົວເຂົາເອງເປັນຜູ້ນຳບໍ່ໄດ້ມາຈາກການຊົງເອີ້ນຂອງພະເຈົ້າ" ຈົດເຊັນບັນຊີ 16

## *ງ. **ການຕຽມ**ຜູ້ນຳ*

ຜູ້ນຳຄົນນື່ງໆ ໄດ້ຮັບການຊົງເອີ້ນໃຫ້ເປັນຜູ້ນຳຕັ້ງແຕ່ເກີດ ແຕ່ຕ້ອງໃຊ້ເວລາທີ່ຈະ**ຕຽມ**ເຂົາສຳລັບຕຳແໜ່ງໜ້າທີ່ໃນການການເປັນຜູ້ນຳ

1. <u>ເອລີຊາ</u>ໄດ້ຮັບການຕຽມໃຫ້ເປັນຜູ້ນຳໂດຍເອລີຢາ

   ລາວໄດ້ຮຽນຮູ້ການເຮັດວຽກໜັກໂດຍການໄຖນາ : 1 ກະສັດ 19:19

GCI

*"ທ່ານກໍອອກໄປຈາກບ່ອນນັ້ນພົບເອລີຊາບຸດຊາຟັດ ຜູ້ກຳລັງໄຖນາຢູ່ດ້ວຍງົວສິບສອງຄູ່ຍ່າງຢູ່ຂ້າງໜ້າ ແລະທ່ານຢູ່ກັບງົວຄູ່ທີ່ສິບສອງ ເອລີຢາກໍຜ່ານໄປຖິ້ມເສື້ອຄຸມລົງເທິງທ່ານ"*

ລາວໄດ້ຮຽນຮູ້ການຮັບໃຊ້ໂດຍການຮັບໃຊ້ເອລີຢາ : 2 ກະສັດ 3:11

*"ແລະເຢໂຮຊາຟັດຕັດວ່າ "ທີ່ນີ້ບໍ່ມີຜູ້ເຜີຍພະວັດຈະນະຂອງພະເຈົ້າ ເພື່ອເຮົາຈະໄດ້ທູນຖາມພະເຈົ້າຫລື " ແລ້ວຂ້າຣາຊະການຄົນນຶ່ງຂອງພະຣາຊາອິສະຣາເອນຈຶ່ງທູນວ່າ "ເອລີຢາບຸດຊາຟັດຢູ່ທີ່ນີ້ພະເຈົ້າຂ້າ ເປັນຜູ້ທີ່ເທນ້ຳໃສ່ມືເອລີຢາ"*

2. ພະເຈົ້າຊົງຕຽມ**<u>ດາວິດ</u>** ເພື່ອເປັນກະສັດ:

ເຂົາໄດ້ຮັບການຕຽມໂດຍການເປັນຜູ້ລ້ຽງແກະ

1 ຊາມູເອນ 16:11
*"ແລ້ວຊາມູເອລກ່າວແກ່ເຈດຊີວ່າ "ລູກຊາຍຂອງທ່ານຢູ່ທີ່ນີ້ໝົດແລ້ວບໍ່" ເຈັດຊີຕອບວ່າ "ຍັງມີຄົນສຸດທ້ອງອີກຄົນນຶ່ງ ເບິ່ງເຖິດເຂົາກຳລັງລ້ຽງແກະຢູ່"*

ເຂົາໄດ້ຮັບການສອນຄວາມເຊື່ອໃນຂະນະທີ່ເຂົາເຮັດວຽກເປັນຜູ້ລ້ຽງແກະ:

*1 ຊາມູເອນ 17:36*
*"ຜູ້ຮັບໃຊ້ຂອງຝ່າພະບາດໄດ້ຂ້າສິງ ແລະໝີນັ້ນມາແລ້ວ ຄົນຟີລິດສະຕິນຜູ້ບໍ່ໄດ້ເຂົ້າສຸນັດຄົນນີ້ເປັນເໝືອນສັດເຫລົ່ານັ້ນຕົວນຶ່ງ ດ້ວຍເຂົາໄດ້ທ້າທາຍກອງທັບຂອງພະເຈົ້າ ຜູ້ຊົງພະຊົນຢູ່"*

ດາວິດຈຶ່ງກາຍເປັນຄົນຖືອາວຸດ ແລະນັກດົນຕຣີຂອງກະສັດຊາອູນ:

*1 ຊາມູເອນ 16:22-23*
*"ດາວິດກໍມາເຝົ້າຊາອູນ ແລະເຂົ້າຮັບຣາຊການ ຊາອູນກໍຊົງຮັກດາວິດຫລາຍ ດາວິດກໍໄດ້ເປັນຄົນຖືອາວຸດຂອງຊາອູນ ແລະຊາອູນຊົງສົ່ງຂ່າວໄປຍັງເຈັດຊີວ່າ "ຈົ່ງອະນຸຍາດໃຫ້ດາວິດຮັບຣາຊການກັບເຮົາ ເພາະເຂົາເປັນທີ່ພໍພະໄທຂອງເຮົາ" ຢູ່ມາເມື່ອວິນຍານຊົ່ວຈາກພະເຈົ້າມາສິງຊາອູນ ເມື່ອໃດ ດາວິດກໍຫຍິບພິນໃຊ້ມືດີດຖວາຍ ຊາອູນກໍຊົງຊຸ່ມຊື່ນຂຶ້ນ ແລະຫາຍດີ ແລະວິນຍານຊົ່ວກໍພາກຈາກພະອົງໄປ*

3. ໂປໂລຕຽມ**<u>ຕີໂມທຽວ</u>**ເປັນຜູ້ນຳ

ໂປໂລໄດ້ນຳຕີໂມທຽວຕິດຕາມທ່ານໃນການເດີນທາງໄປປະກາດໃນທີ່ຕ່າງໆ

"ຝ່າຍໂປໂລໄປຍັງເມືອງເດີບີ ກັບເມືອງລີສຕາດ້ວຍ ແລະນີ້ແຫລະທີ່ນັ້ນມີສາວົກຄົນນຶ່ງຊື່ຕີໂມທຽວ ມານດາເປັນຊາດຢິວ ແລະເປັນສິດພະເຢຊູ –ແຕ່ບິດາເປັນຊາດກຣີກ"

*"ເມື່ອທ່ານເຫລົ່ານັ້ນໄດ້ທຽວໄປຕາມເມືອງຕ່າງໆກໍໄດ້ສົ່ງໜັງສືຂໍ້ຕົກລົງຂອງອັກຄະສາວົກ ແລະຜູ້ປົກຄອງໃນກຸງເຢລູຊາເລັມມອບໃຫ້ຄົນທັງຫລາຍທຸກເມືອງເພື່ອໃຫ້ປະພຶດຕາມ"* ກິຈະການ 16:1,4

ພະເຈົ້າຊົງສາມາດຈະຕຽມເຮົາໃຫ້ເປັນຜູ້ນຳໂດຍຜ່ານທາງ:
- **ງານປະຈຳ**
- **ການສຶກສາ**
- **ຮຽນຮູ້ຈາກຜູ້ນຳຄົນອື່ນ**
- **ການທົດລອງ ແລະຄວາມທຸກຍາກລຳບາກ**

## II. ການເປັນຜູ້ນຳ ແລະການມີຊີວິດທີ່ບໍລິສຸດ

### ກ. ໃນຖານະທີ່ເປັນຜູ້ນຳເຮົາຈະຕ້ອງມີບຸກຄະລິກທີ່ສະແດງອອກເຖິງຊີວິດທີ່ບໍລິສຸດ

1. **<u>ພະເຈົ້າພະບິດາ</u>**ຊົງບໍລິສຸດ ເອຊາຢາ 6:3
   ຕົວຢ່າງ: ການບູຊາຮູບເຄົາລົບ ແລະກະທຳອຳນາດໃນພະວິຫານໃນເມືອງໂກລິນໂທ

2. <u>ພະເຢຊູ</u>ຊົງບໍລິສຸດ ລູກາ 4:34

3. **<u>ພະວິນຍານບໍລິສຸດ</u>**ຊົງບໍລິສຸດ ໂຢຮັນ 14:26

ຄຳຖາມ: ການຈະດຳເນີນຊີວິດໃນຄວາມບໍລິສຸດ ເປັນຄວາມຮັບຜິດຊອບຂອງໃຜ?

1 ເທຊະໂລນີກ 5:23 ເຮັບເຣີ 12:14

*1 ເທຊະໂລນີກ 5:23*
*23 ຂໍໃຫ້ພະເຈົ້າຜູ້ຊົງໂຜດປະທານສັນຕິສຸກນັ້ນ ຈົ່ງຊົງບັນດານໃຫ້ເຈົ້າທັງຫລາຍເປັນຄົນບໍຣິສຸດຮຽບຮ້ອຍ ແລະຊົງຮັກສາວິນຍານ ຈິດໃຈ ແລະກາຍຂອງພວກເຈົ້າໄວ້ບໍ່ໃຫ້ມີຂໍ້ຕິຕຽນໄດ້ ໃນເມື່ອອົງພະຜູ້ເປັນເຈົ້າຂອງເຮົາທັງຫລາຍ ຄືພະເຢຊູຄຣິດຈະສະເດັດມາປາກົດ.*

*ເຮັບເຣີ 12:14*
*14 ຈົ່ງອົດສາພຍາຍາມທີ່ຈະຢູ່ຢ່າງສງົບສຸກກັບຄົນທັງຫລາຍ ແລະອົດສາພະຍາຍາມທີ່ຈະໄດ້ໃຈບໍລິສຸດ ຊຶ່ງຖ້າໃຈບໍ່ບໍຣິສຸດກໍຈະບໍ່ມີຜູ້ໃດໄດ້ເຫັນອົງພະຜູ້ເປັນເຈົ້າ.*

### ຂ. ເຮົາຈະບໍລິສຸດໄດ້ຢ່າງໃດ

1 ເທຊະໂລນີກ 5:23
*23 ຂໍໃຫ້ພະເຈົ້າຜູ້ຊົງໂຜດປະທານສັນຕິສຸກນັ້ນ ຈົ່ງຊົງບັນດານໃຫ້ເຈົ້າທັງຫລາຍເປັນຄົນບໍຣິສຸດຮຽບຮ້ອຍ ແລະຊົງຮັກສາວິນຍານ ຈິດໃຈ ແລະກາຍຂອງພວກເຈົ້າໄວ້ບໍ່ໃຫ້ມີຂໍ້ຕິຕຽນໄດ້ ໃນເມື່ອອົງພະຜູ້ເປັນເຈົ້າຂອງເຮົາທັງຫລາຍ ຄືພະເຢຊູຄຣິດຈະສະເດັດມາປາກົດ.*

1. ໃນຝ່າຍ**<u>ວິນຍານ</u>:**
   ພວກເຮົາຕ້ອງຮັກສາຕົວເຮົາຈາກ ການນັບຖືຮູບເຄົາລົບ (ອົບພະຍົບ 20:3,4)
   ນັບຖື ເວດມົນຄາຖາ ອາຄົມ ຫລືການໄປຫາ ໝໍຜີ (ເລວີນິຕິ 20:27))
   ການໝໍດູ (ເລວີນິຕິ 19:26) ແລະອື່ນໆ

   ອົບພະຍົບ 20:3,4
   *3 ພວກເຈົ້າຢ່າມີພະອື່ນ ນອກຈາກເຮົາ.*
   *4 ພວກເຈົ້າຢ່າເຮັດຮູບໂຄລົບສຳລັບຕົນ ຫລືຮູບສິ່ງໜຶ່ງສິ່ງໃດທີ່ມີຢູ່ໃນສະຫວັນຊັ້ນຟ້າ ໃນແຜ່ນດິນຫລືໃນນໍ້າລຸ່ມແຜ່ນດິນ.*

2. ໃນຝ່າຍຂອງ**ຈິດ:**
   ພວກເຮົາຕ້ອງລະວັງຈາກຮາກຂອງຄວາມຂົມຂື່ນ (ເຮັບເຣີ 12:15, ເອເຟໂຊ 4:31)

GCI

ແລະຮາກຂອງການຖືກປະຕິເສດ ຫລືຖືກທອດຖິ້ມ (ເອຊາຢາ 53:3)

ເຮັບເຣີ 12:15
*ຈົ່ງຄອຍຮັກສາໃຫ້ດີ ຢ້ານວ່າຈະມີຜູ້ໃດຂາດຈາກພະຄຸນຂອງພະເຈົ້າ ຢ້ານວ່າຈະມີຮາກຂົມຂື່ນງອກຂຶ້ນມາເຮັດໃຫ້ມີຄວາມຫຍຸ້ງຍາກ ຊຶ່ງຈະເປັນເຫດໃຫ້ຫລາຍຄົນຊົ່ວມົວຫມອງໄປ*

3. ໃນຝ່າຍ**ຮ່າງກາຍ**
ໃນຖານະຜູ້ນຳ, ເຮົາຕ້ອງລະວັງຈາກການເຮັດຜິດສິນລະທຳດ້ວຍການລ່ວງປະເວນີ (1 ໂກຣິນໂທ 6:19) ແລະ ການຕິດຢຶດກັບພຶດຕິກຳທີ່ບໍ່ດີ ເຊັ່ນ ການຕິດເຫລົ້າ ແລະຢາເສບຕິດ (1 ໂກຣິນໂທ 6:12)

1 ໂກຣິນໂທ 6:19
*ເຈົ້າທັງຫລາຍບໍ່ຮູ້ຫລືວ່າຮ່າງກາຍຂອງເຈົ້າເປັນວິຫານຂອງພະວິນຍານບໍຣິສຸດ ຜູ້ຊຶ່ງຊົງສະຖິດຢູ່ໃນພວກເຈົ້າຊຶ່ງພວກເຈົ້າໄດ້ຮັບຈາກພະເຈົ້າ ເຈົ້າບໍ່ແມ່ນເຈົ້າຂອງຕົວເອງ*

## ຄ. ທາງທີ່ສາມາດເຮັດໃຫ້ຊີວິດບໍ່ບໍລິສຸດ

1. **ຕາ** — ມັດທາຍ 6:22
2. **ຫູ** — ມາຣະໂກ 4:24
3. **ປາກ** — ເອເຟໂຊ 4:29
4. **ຄວາມຄິດ** — 2 ໂກຣິນໂທ 10:5

## ງ. ຕົວຢ່າງຂອງຜູ້ນຳທີ່ມີຊີວິດບໍລິສຸດ

1. **ຄາເລບ**ກັບ**ໂຢຊວຍ** — ກັນດານວິຖີ 14:24
2. **ໂຢເຊບ** — ປະຖົມມະການ 39:9-10
3. **ຊາມູເອນ** — 1 ຊາມູເອນ 12:4
4. **ດານຽນ** — ດານຽນ 1:8

*ດານຽນ 1:8*
*ດານີເອນໄດ້ຕັດສິນໃນວ່າ ຈະບໍ່ເຮັດຜິດພະເຈົ້າຍ້ອນອາຫານແລະນ້ຳອະງຸ່ນຂອງພະຣາຊາ ເຂົາໄດ້ຂໍຮ້ອງຫົວຫນ້າຂັນທີໃຫ້ຊ່ອຍເຫລືອເຂົາ*

GCI

## ຈ. ຕົວຢ່າງຂອງຜູ້ນຳທີ່ມີຊີວິດບໍ່ບໍລິສຸດ

1. **<u>ກະສັດຊາໂລມອນ</u>**

*"ເພາະຢູ່ມາເມື່ອຊາໂລມອນຊົງພະຊະຣາແລ້ວ ມະເຫສີຂອງພະອົງໄດ້ຫັນພະໄທຂອງພະອົງໃຫ້ໄປຕາມພະອື່ນ ແລະພະໄທຂອງພະອົງບໍ່ໄດ້ຕັ້ງຕໍ່ພະເຢໂຮວາພະເຈົ້າຂອງພະອົງ ດັ່ງພະໄທຂອງດາວິດຣາຊບິດາຂອງພະອົງ" 1 ກະສັດ 11:4*

2. **<u>ແຊມຊັນ</u>**

*ແຊມຊັນໄປທີ່ເມືອງກາຊາພົບຍິງແພດສະຫຍາຄົນນຶ່ງກໍເຂົ້າໄປນອນດ້ວຍ" ພວກຜູ້ປົກຄອງ 16:1*

# III. ການເປັນຜູ້ນຳ ແລະຄວາມສັດຊື່

## *ກ. ເປົ້າໝາຍຂອງຊີວິດທີ່**<u>ຊອບທຳ</u>***

1. ເພາະສັດຕູຂອງເຮົາ

*"ຂ້າແດ່ພະເຈົ້າ ເນື່ອງດ້ວຍພວກສັດຕູຂອງຂ້າພະອົງ ຂໍຊົງນຳຂ້າພະອົງໄປໂດຍຄວາມຊອບທຳຂອງພະອົງ ຂໍຊົງ ໂປດທຳທາງຊຶ່ງຂ້າພະອົງເດີນນັ້ນໃຫ້ລາບລື້ນ" ເພງສັນລະເສີນ 5:8*

ກ) **<u>ຊາຕານ</u>** –ແລະອຳນາດຂອງຜີ ເອເຟໂຊ 6:12

ຂ) ຄົນ**<u>ຝ່າຍໂລກ</u>**ທີ່ຕໍ່ຕ້ານພະເຈົ້າ ຟີລິບບອຍ 1:15

ຄຳຖາມ ອັນໃດຈະເກີດຂຶ້ນຖ້າເຮົາດຳເນີນຊີວິດຢ່າງບໍ່ຊອບທຳ

1). ເຮົາໃຫ້**<u>ໂອກາດ</u>**ແກ່ມານ ເອເຟໂຊ 4:27
*"ຢ່າໃຫ້ໂອກາດແກ່ມານ"*

2). ເຮົາໃຫ້ໂອກາດແກ່ສັດຕູທີ່ຈະ**<u>ລໍ້ລວງ</u>**ເຮົາ

2. ເພາະເຫັນແກ່**<u>ນາມຊື່</u>**ຂອງພະເຈົ້າ:

*"ຊົງຟື້ນຈິດວິນຍານຂອງຂ້າພະເຈົ້າ ພະອົງຊົງນຳຂ້າພະເຈົ້າໄປໃນທາງຊອບທຳເພາະເຫັນແກ່ພະນາມຂອງພະອົງ" ເພງສັນລະເສີນ 23:3 ,*

*(ໂກໂລຊາຍ 3:17 )*
*ແລະເມື່ອເຈົ້າທັງຫລາຍຈະເຮັດສິ່ງດ້ວຍວາຈາຫລືດ້ວຍການກະທຳກໍຕາມ ຈົ່ງເຮັດທຸກສິ່ງໃນພະນາມຂອງພະເຢຊູເຈົ້າ ແລະຂອບພະຄຸນ ພະບິດາເຈົ້າໂດຍພຣະອົງນັ້ນ*

GCI

## *ຂ. ພະພອນສຳລັບຄວາມຊອບທຳຂອງຜູ້ນຳ*

ເພງສັນລະເສີນ 112 ເພງສັນລະເສີນ 1

1. ການທຸກຢ່າງຊຶ່ງເຂົາກະທຳກໍ**<u>ຈຳເລີນຂຶ້ນ</u>** ເພງສັນລະເສີນ 1:3
2. **<u>ເຊື້ອສາຍ</u>**ຂອງເຂົາຈະໄດ້ຮັບພະພອນ ເພງສັນລະເສີນ 112:2
3. ຈະໄດ້ຮັບການ**<u>ປົກປ້ອງຮັກສາ</u>** ເພງສັນລະເສີນ 91
4. ຄຳອະທິຖານຂອງເຮົາຈະໄດ້ຮັບ**<u>ຄຳຕອບ</u>** ເພງສັນລະເສີນ 34:4
5. ເຂົາຈະໄດ້ຮັບ**<u>ການສຳແດງ</u>**ຈາກພະເຈົ້າ ເພງສັນລະເສີນ 23:4
6. ເຂົາຈະມີ**<u>ສັນຕິສຸກ</u>**ຈາກພະເຈົ້າ ຟີລິບປອຍ 4:4 ເນເຫມີ 8:10
7. ເຂົາບໍ່ຕ້ອງ**<u>ຢ້ານກົວ</u>**ຕໍ່ຂ່າວຮ້າຍ ເພງສັນລະເສີນ 112:7
8. ເຂົາຈະໄດ້ຮັບ**<u>ການຍົກເວັ້ນ</u>**ຈາກຄວາມຮ້າຍຂອງພະເຈົ້າ ເພງສັນລະເສີນ 34:19

## ຄ. ຕົວຢ່າງຂອງຜູ້ຮັບໃຊ້ທີ່ສັດຊື່

1. ໂມເຊ ຈົດເຊັນບັນຊີ 16:15
2. ໂຢເຊບ ປະຖົມມະການ 39:8
3. ເອລີຊາ 2 ກະສັດ 5:16

## ງ. ຕົວຢ່າງຂອງຜູ້ທີ່ດຳເນີນຊີວິດຢ່າງບໍ່ສັດຊື່

1. ພັນລະຍາຂອງໂປທິຟາ ປະຖົມມະການ 39:7–8
2. ອາຄານ ໂຢຊວຍ 7:20–21
3. ອານາເນຍ ກັບ ຊາຟີລາ ກິຈະການ 5:1–11

## ຈ. ສິ່ງທີ່ຈະເຮັດໃຫ້ເກີດຄວາມບໍ່ສັດຊື່ໃນຊີວິດ

1. ການລ່ວງປະເວນີ ເຮັບເຣີ 13:4
2. ຊັບສິນເງິນທອງ ເຮັບເຣີ 13:5
3. ຄຳເວົ້າ ຢາໂກໂບ 5:12

GCI

ສ. ເຄັດລັບທີ່ຈະນຳໄປສູ່ການມີຊີວິດທີ່ສັດຊື່

1. ການ**<u>ພໍໃຈ</u>**ໃນສິ່ງທີ່ມີຢູ່ ເຮັບເຣີ 13:5

2. ການຮູ້ເຖິງ**<u>ການຊົງສະຖິດ</u>**ຂອງພະເຈົ້າ ເຮັບເຣີ 13:5

3. ການເອົາແບບຢ່າງຜູ້ນຳທີ່ມີຊີວິດຕາມນ້ຳພະໄທ**<u>ພະເຈົ້າ</u>** ເຮັບເຣີ 13:7

4. ການຍຶດແໜ້ນຢູ່ໃນ**<u>ພະວັດຈະນະ</u>**ຂອງພະເຈົ້າ ເພງສັນລະເສີນ 119:9-11

5. **<u>ການອະທິຖານ</u>** ມັດທາຍ 26:41

# V. ການເປັນຜູ້ນຳ ແລະຄວາມສັດຊື່

ກ. ອັກຄະສາວົກໂປໂລເປັນແບບຢ່າງຂອງຜູ້ນຳທີ່ມີ**<u>ຄວາມຊື່</u>**ສັດຕໍ່ພະເຈົ້າ

1. ອາຈານໂປໂລບໍ່ເຄີຍທໍ້ຖອຍເຖິງແມ່ນຈະປະສົບກັບຄວາມ**<u>ທຸກລຳບາກ</u>** ແລະ **<u>ບັນຫາຫຍຸ້ງຍາກ</u>**
   2 ໂກຣິນໂທ 11:23-24

2. ພະເຈົ້າເປັນພະເຈົ້າທີ່ຊົງ**<u>ສັດຊື່</u>** ແລະຮັກສາພັນທະສັນຍາ
   ພະບັນຍັດ 7:9

ຂ. ພະເຈົ້າຊົງສະແຫວງຫາຄວາມສັດຊື່ໃນຊີວິດການຮັບໃຊ້ຂອງເຮົາ

ເຮົາຕ້ອງສັດຊື່ໃນການໃຊ້ສິ່ງທີ່ພະເຈົ້າຊົງປະທານໃຫ້ເຮົາ

1. ເວລາ ເອເຟໂຊ 5:15

2. ເງິນທອງ ມັດທາຍ 25:14-30

3. ຂອງປະທານ 1 ເປໂຕ 4:10

ຄ. ເປັນຫຍັງຜູ້ນຳບາງຄົນຈຶ່ງຢຸດກາງຄັນໃນການຮັບໃຊ້ພະເຈົ້າ

1. ບໍ່ຍອມຮັບການ**<u>ກ່າວຕັກເຕືອນ</u>** ສຸພາສິດ 12; ເອເຟໂຊ 5:15:

2. **<u>ເບື່ອໜ່າຍ</u>** ຊຶ່ງມີສາເຫດມາຈາກ:

   ກ) ໂມເຊຮູ້ສຶກທໍ້ຖອຍເພາະເບື່ອໜ່າຍ ຈົດເຊັນບັນຊີ 11:11-15

   ຂ) ກົນລະຍຸດຂອງຊາຕານທີ່ຈະເຮັດໃຫ້ຜູ້ເຊື່ອທໍ້ຖອຍ ດານຽນ 7:25

3. **<u>ການມຸ້ງເປົ້າ</u>**ທີ່ຜິດ ເຮັບເຣີ 12:2

GCI

4. ຄວາມປາດຖະໜາໃນຜົນ**<u>ສະເພາະໜ້າ</u>** ຜູ້ປະກາດ 3:1; ຄາລາເຕຍ 6:7-9

**ງ. ຜູ້ນໍາທີ່ດີມີຄວາມສັດຊື່ຕໍ່ພະເຈົ້າ ຈະເປັນແຫລ່ງກະຕຸ້ນໃຫ້ກໍາລັງໃຈແກ່ຜູ້ທີ່ຕິດຕາມ**

ເອເຟໂຊ 6:21 ...ຕີຂີໂກ, ຜູ້ເປັນນ້ອງທີ່ຮັກແລະເປັນຜູ້ປະຕິບັດທີ່ສັດຊື່ໃນອົງພະຜູ້ເປັນເຈົ້າ...

1. ຕີຂີໂກ ເອເຟໂຊ 6:21
2. ເອປາຟາ ໂກໂລຊາຍ 4:12
3. ພະເຢຊູ: ຜູ້ຊຶ່ງເປັນຕົ້ນແບບຂອງເຮົາ ເຮັບເຣີ 3:6

# V. ການເປັນຜູ້ນໍາ ແລະການຖ່ອມໃຈ

ຜູ້ນໍາໃນຄຣິສຕະຈັກຍຸກທໍາອິດເປັນຜູ້ນໍາທີ່ມີຄວາມຖ່ອມໃຈ : ກິຈະການ 28:3, 1 ເປໂຕ 5:3

*1 ເປໂຕ 5:3*
*ບໍ່ແມ່ນເຫມືອນເປັນເຈົ້ານາຍເຫນືອພວກທີ່ຊົງຝາກໄວ້ກັບພວກທ່ານ ແຕ່ໃຫ້ເປັນແບບຢ່າງແກ່ຝູງແກະນັ້ນ*

## *ກ. ອາຈານໂປໂລ: ຜູ້ນໍາທີ່ຖ່ອມໃຈ*

1. ອາຈານໂປໂລເຖິງແມ່ນຈະມີພູມຫລັງທີ່ເປັນຄົນມີຊື່ສຽງແຕ່ກໍເປັນຜູ້ນໍາທີ່ມີ**<u>ຄວາມຖ່ອມໃຈ</u>** ຟີລິບປອຍ 3:4-6

   *ຟີລິບປອຍ 3:4-6*
   *4 ເຖິງແມ່ນວ່າເຮົາມີເຫດທີ່ຈະໄວ້ໃຈໃນຝ່າຍມະນຸດກໍຕາມ ຖ້າຄົນອື່ນນຶກວ່າຕົນມີເຫດທີ່ຈະໄວ້ໃຈໃນຝ່າຍມະນຸດນັ້ນ ເຮົາກໍມີຫລາຍກວ່າເຂົາອີກ 5 ຄືເມື່ອເຮົາເກີດມາໄດ້ແປດວັນເຮົາກໍໄດ້ຮັບພິທີຕັດ ເຮົາເປັນຊາດອິສະຣາເອນ ແຕ່ຕະກູນເບັນຢາມິນ ເປັນຄົນເຮັບເຣີ ເກີດຈາກຊາວເຮັບເຣີ ໃນດ້ານພະບັນຍັດເຮົາກໍຢູ່ໃນຄນະຟາຣີຊາຍ 6 ໃນດ້ານໃຈຮ້ອນຮົນເຮົາກໍໄດ້ຂົ່ມເຫັງຄຣິສຕະຈັກ ໃນດ້ານຄວາມຊອບທໍາຊຶ່ງມີຢູ່ໂດຍພະບັນຍັດ ເຮົາກໍບໍ່ມີທີ່ຕິຕຽນໄດ້*

   ກ) ເກີດໃນເມືອງຕາໂຊ ກິຈະການ 22:3

   ຂ) ເປັນຟາລີຊາຍ ຟີລິບປອຍ 3:5

   ຄ) ມີສັນຊາດໂຣມ ກິຈະການ 22:25-28

   ງ) ໄດ້ສຶກສາຮໍ່າຮຽນຈາກຄາມາລີເອລ ກິຈະການ 22:3

GCI

2. ອາຈານໂປໂລມີວິນຍານຂອງການ**<u>ຮັບໃຊ້</u>**

   ອາຈານໂປໂລເຮັດຕາມແບບຢ່າງຂອງພະເຢຊູຄຣິດ 1 ໂກຣິນໂທ 11:1, ມາຣະໂກ 10:45

   *1 ໂກຣິນໂທ 11:1*
   *ເຈົ້າທັງຫລາຍຈົ່ງປະຕິບັດຕາມແບບຢ່າງຂອງເຮົາ ເຫມືອນເຮົາປະຕິບັດຕາມແບບຢ່າງຂອງພະຄຣິດ*

## *ຂ. ສັນຍາລັກຂອງຄວາມຖ່ອມໃຈ*

*ໂຣມ 12:3*
*ເຮົາກ່າວແກ່ເຈົ້າທັງຫລາຍທຸກຄົນໂດຍພະຄຸນທີ່ຊົງປະທານແກ່ເຮົາແລ້ວວ່າ ຢ່າຄຶດຖືຕົວເກີນທີ່ຕົນຄວນຈະຄຶດນັ້ນ ແຕ່ຈົ່ງຄຶດໃຫ້ພໍສົມກັບຂະນາດແຫ່ງຄວາມເຊື່ອທີ່ພະເຈົ້າໄດ້ຊົງໂຜດປະທານໃຫ້ແກ່ທຸກຄົນ*

1. ຄວາມຖ່ອມໃຈເຮັດໃຫ້ຜູ້ນຳສາມາດເຮັດວຽກທີ່ຄົນອື່ນບໍ່ຢາກຈະເຮັດ**<u>ໂດຍປັດສະຈາກຄວາມຜິດຫວັງ</u>**ໃນຄົນທີ່ບໍ່ໄດ້ ເຮັດງານນັ້ນ. ຟີລິບປອຍ 2:14

2. ຄວາມຖ່ອມໃຈເຮັດໃຫ້ຜູ້ນຳເປັນ**<u>ຄົນສຸພາບ</u>** ແລະບໍ່**<u>ຜະເດັດການ</u>**.
   1 ເປໂຕ 5:3; 1 ຕີໂມທຽວ 3:3

3. ຄວາມຖ່ອມໃຈເຮັດໃຫ້ຜູ້ນຳຮັບໃຊ້ໂດຍປັດສະຈາກການ**<u>ໄດ້ຮັບການຍົກຍ້ອງ</u>** ຫລື ກ່າວເຖິງ.
   ເຮັບເຣີ 6:10

4. ຄວາມຖ່ອມໃຈເຮັດໃຫ້ຜູ້ນຳບໍ່ມີ**<u>ຄວາມຄຽດແຄ້ນ</u> (ຜູກໃຈເຈັບ).** ຈົດເຊັນບັນຊີ 12:3

5. ຄວາມຖ່ອມໃຈເຮັດໃຫ້ຜູ້ນຳສາມາດມີຄວາມສຳພັນກັບ**<u>ຜູ້ເລັກນ້ອຍ</u>**. ໂຣມ12:16

6. ຄວາມຖ່ອມໃຈເຮັດໃຫ້ຜູ້ນຳປັດສະຈາກ**<u>ຄວາມເຫັນແກ່ຕົວ</u>**. ຟີລິບປອຍ 2:3; ພສສ 75:5

7. ຄວາມຖ່ອມໃຈເຮັດໃຫ້ຜູ້ນຳ**<u>ສາມາດພິຈາລະນາ</u>**ວ່າ ຜູ້ອື່ນດີກວ່າຕົນເອງ. ຟີລິບປອຍ 2:3

8. ຄວາມຖ່ອມໃຈເຮັດໃຫ້ຜູ້ນຳສາມາດຍອມຮັບ**<u>ຄຳແນະນຳ</u>** ຫລື ຄຳຕຳນິວິຈານຈາກຄົນອື່ນ.
   ສຸພາສິດ 12:15

## *ຄ. ປະໂຫຍດຂອງຄວາມຖ່ອມໃຈ*

1 ເປໂຕ 5:5
*ເຫມືອນດັ່ງນັ້ນແຫລະ, ພວກທ່ານຜູ້ມີອາຍຸອ່ອນກວ່າ ຈົ່ງນ້ອມຟັງພວກເຖົ້າແກ່ ພວກທ່ານທຸກຄົນຈົ່ງເອົາຄວາມຖ່ອມໃຈເປັນເຄື່ອງຄາດແອວໄວ້ ໃນການປະຕິບັດເຊິ່ງກັນແລະກັນ ດ້ວຍວ່າ, "ພະເຈົ້າຊົງຕໍ່ສູ້ຄົນທີ່ຈອງຫອງ ແຕ່ຊົງປະທານພະຄຸນແກ່ຄົນທີ່ຖ່ອມໃຈລົງ"*

1. ພະເຈົ້າຈະຊົງຢູ່**<u>ຄຽງຂ້າງ</u>**

GCI

2. ພະເຈົ້າຈະຊົງປະທານ**<u>ພະກະລຸນາຄຸນ</u>**

3. ພະເຈົ້າຊົງສະຖິດຢູ່ດ້ວຍ ແລະ**<u>ເປັນກຳລັງ</u>**ແກ່ຜູ້ມີຄວາມຖ່ອມໃຈ

## VI. ການເປັນຜູ້ນຳ ແລະການຍອມຈຳນົນຕໍ່ພະເຈົ້າ

ເອຊາຢາ 1:19-20

ເອຊາຢາໄດ້ອະທິບາຍເຖິງການ**<u>ຕອບສະໜອງ</u>** 2 ປະການ: ການເຕັມໃຈ ແລະການເຊື່ອຟັງ ຫລື ການຕໍ່ຕ້ານ (ກະບົດ)

ເອຊາຢາໄດ້ສະຫລຸບເປັນ**<u>ເກີດຜົນ</u>**ສອງປະການ: :ກິນຜົນດີແຫ່ງແຜ່ນດິນ ຫລືເປັນເຫຍື່ອຂອງຄົມດາບ

ເຕັມໃຈເຊື່ອຟັງຕໍ່ : ຫົວໜ້າຜູ້ລ້ຽງ ແລະພາຍໃຕ້ຜູ້ລ້ຽງ.

*ເອຊາຢາ 1:19-20*
*19 ຖ້າເຈົ້າເຊື່ອຟັງເຮົາ*
*ເຈົ້າຈະໄດ້ກິນຂອງດີໃນແຜ່ນດິນ*
*20 ແຕ່ຖ້າປະຕິເສດແລະດື້ດຶງ*
*ເຈົ້າຈະໄດ້ຮັບໂທດເຖິງຕາຍ*
*ເຮົາຄືພະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ"*

### *ກ. ພະເຢຊູຄຣິດຊົງເປັນແບບຢ່າງຂອງການຍອມຈຳນົນຕໍ່ພະເຈົ້າ*

ພະອົງຊົງ**<u>ເຊື່ອຟັງ</u>**ພໍ່ຝ່າຍໂລກ

ລູກາ 2:51-52
*59 ແລ້ວພະກຸມມານກໍລົງໄປກັບເຂົາໄປຍັງເມືອງນາຊາເຣັດ ແລະຍອມຢູ່ໃຕ້ບັງຄັບບັນຊາຂອງເຂົາ ສ່ວນມານດາກໍເກັບຂໍ້ຄວາມທັງຫລາຍນີ້ໄວ້ໃນໃຈ 59 ພະເຢຊູກໍໄດ້ຈະເຣີນຂຶ້ນໃນດ້ານສະຕິປັນຍາ ໃນດ້ານຮ່າງກາຍ ເປັນທີ່ຊອບຕໍ່ພະເຈົ້າແລະຕໍ່ມະນຸດເຫມືອນກັນ*

ພະພອນຈາກການຍອມຈຳນົນ
1. ພະເຢຊູຄຣິດຊົງຈຳເລີນຂຶ້ນດ້ານ**<u>ສະຕິປັນຍາ</u>**

2. ຊົງເປັນທີ່ຊອບພະໄທຕໍ່ພະພັກ**<u>ພະເຈົ້າ</u>**

3. ເປັນທີ່ຊອບຕໍ່ໜ້າ**<u>ຄົນທັງປວງ</u>**

### *ຂ. ຕົວຢ່າງຂອງຜູ້ນຳທີ່ບໍ່ຍອມຈຳນົນຕໍ່ພະເຈົ້າ*

1. ກະສັດຊາອູນ 1 ຊາມູເອນ 15:10-11,22-23

2. ນາດັບ ແລະອາບີຮູ ລະບຽບເລວີ 10:1-2

GCI

## *ຄ. ຕົວຢ່າງຂອງຜູ້ນຳທີ່ຍອມຈຳນົນຕໍ່ພະເຈົ້າ*

1. ໂນອາ ປະຖົມມະການ 6:22
2. ໂປໂລ ກິຈະການ 26:19
3. ມາຣີອາ ລູກາ1:22

## *ງ. ໂຄງສ້າງພື້ນຖານ ສີ່ ປະການຂອງສິດທິອຳນາດ*

1. ຄອບຄົວ ເອເຟໂຊ 5:22–24

   *ຝ່າຍພັນລະຍາ ຈົ່ງຍອມຢູ່ໃຕ້ບັງຄັບສາມີຂອງຕົນ ເຫມືອນຍອມຟັງອົງພະຜູ້ເປັນເຈົ້າ ເພາະວ່າສາມີເປັນສີສະຂອງພັຣຍາ ເຫມືອນພະຄຣິດຊົງເປັນປະມຸກຂອງຄຣິສຕະຈັກ ຊຶ່ງເປັນພະກາຍຂອງພະອົງ ແລະພະອົງຊົງເປັນຜູ້ໂຜດໃຫ້ຄຣິສຕະຈັກນັ້ນພົ້ນ ຄຣິສຕະຈັກຍອມຢູ່ໃຕ້ບັງຄັບຂອງພະຄຣິດສັນໃດ ພັນລະຍາກໍຄວນຍອມຢູ່ໃຕ້ບັງຄັບສາມີຂອງຕົນທຸກປະການສັນນັ້ນ*

2. ລັດຖະບານ ໂຣມ 13:1

   *ທຸກຄົນຈົ່ງຍອມຢູ່ໃຕ້ບັງຄັບຜູ້ມີອຳນາດປົກຄອງ ດ້ວຍວ່າບໍ່ມີອຳນາດອັນໃດທີ່ບໍ່ໄດ້ມາຈາກພະເຈົ້າ ແລະຜູ້ທີ່ມີອຳນາດນັ້ນກໍແມ່ນພະເຈົ້າຊົງແຕ່ງຕັ້ງຂຶ້ນ*

3. ຄຣິສຕະຈັກ ເຮັບເຣີ 13:17

   *ທ່ານທັງຫລາຍຈົ່ງຍອມຟັງແລະຍອມຢູ່ໃນໂອວາດຜູ້ນຳຂອງພວກທ່ານ ເພາະເຂົາເຫລົ່ານັ້ນດູແລຈິດວິນຍານຂອງພວກທ່ານຢູ່ ເຫມືອນນຶ່ງຜູ້ທີ່ຈະຕ້ອງສະເຫນີລາຍງານ ເພື່ອເຂົາຈະໄດ້ເຮັດງານນີ້ດ້ວຍຄວາມຊື່ນໃຈ ບໍ່ແມ່ນດ້ວຍຄວາມເສົ້າໃຈ ຊຶ່ງຈະບໍ່ເປັນປະໂຫຍດແກ່ທ່ານທັງຫລາຍ*

4. ນາຍຈ້າງ ໂກໂລຊາຍ 3:22

   *ຝ່າຍພວກຂ້ອຍຂ້າ, ຈົ່ງຟັງຄວາມຜູ້ທີ່ເປັນນາຍຝ່າຍມະນຸດໃນທຸກສິ່ງ ບໍ່ໃຊ່ເຮັດຖະແຫລງຫນ້າເຫມືອນຢ່າງຄົນຜູ້ມັກເຮັດແຕ່ໃຫ້ຊອບໃຈມະນຸດເທົ່ານັ້ນ*

## *ຈ. ພະເຈົ້າຊົງປັ້ນບັນດາຜູ້ນຳຂອງພະອົງ*

1. ພະເຈົ້າຊົງໃຊ້**<u>ສິດທິອຳນາດ</u>**ຂອງມະນຸດ. ໂຣມ 13:1–7
2. ພະເຈົ້າຊົງໃຊ້ເຫດການຫລືເວລາທີ່ເປັນຄວາມທຸກຍາກລຳບາກ: ຢາໂກໂບ 1:2–4

GCI

# VII. ຊີວິດດ້ານອື່ນໆ ຂອງການເປັນຜູ້ນຳ

## *ກ. ຜູ້ນຳກັບ**ອຸທິດ**ຊີວິດ*

1. ຕ້ອງໃຊ້ເວລາໃນການ**ນະມັດສະການ**ປະຈຳວັນ ໂຢຮັນ 4:24
2. ຕ້ອງໃຊ້ເວລາໃນການ**ອະທິຖານ**ປະຈຳວັນ 1 ເທຊະໂລນິກ 5:17
3. ຕ້ອງໃຊ້ເວລາໃນການອ່ານ**ພະອັດຈະນະ**ຂອງພະເຈົ້າທຸກວັນ ໂກໂລຊາຍ 3:16
4. ຕ້ອງໃຊ້ເວລາໃນການທົບທວນໄຕ່ຕອງພະອັດຈະນະຂອງພະເຈົ້າ ໂຢຊວຍ 1:8
5. ຈະຕ້ອງ*ເຊື່ອຟັງ*ພະອັດຈະນະຂອງພະເຈົ້າ ໂຢຮັນ 15:10

## *ຂ. ຜູ້ນຳກັບຊີວິດສ່ວນຕົວ*

1. ຄວນຈະດູແລຮັກສາສຸຂະພາບຮ່າງກາຍຂອງຕົນເອງ: 1 ໂກຣິນໂທ 3:16-17
   ກ) ຮັບປະທານອາຫານທີ່ມີປະໂຫຍດ
   ຂ) ພັກຜ່ອນທີ່ດີພຽງພໍ
   ຄ) ອອກກຳລັງກາຍທີ່ດີສະເໝີສະເໝີ
2. ຕ້ອງສະແຫວງຫາທີ່ຈະພັດທະນາ**ຄວາມຮູ້ໃຫມ່ໆ**
   ກ) ຮຽນພິເສດ ຫລື ເຂົ້າຮ່ວມສຳມະນາ
   ຂ) ອ່ານໜັງສືທີ່ມີປະໂຫຍດ
3. ເບິ່ງແຍງເອົາໃຈໃສ່**ຄອບຄົວ**
   ກ) ພັດທະນາຄວາມສຳພັນກັບພັນລະຍາ 1 ຕີໂມທຽວ 2,3; ເອເຟໂຊ 5:25-33
   ຂ) ໃຊ້ເວລາກັບລູກ ແລະພັນລະຍາ

GCI

## *ຄ. ຜູ້ນຳກັບຊີວິດໃນອົງກອນ*

1. ຜູ້ນຳມີຄວາມຮັບຜິດຊອບໃນການຕັ້ງ**<u>ເປົ້າໝາຍຂອງອົງການ</u>**: ສຸພາສິດ 29:18

2. ຜູ້ນຳຕ້ອງເປັນ**<u>ຜູ້ກະຕຸ້ນ</u>** : ເຮັບເຣີ 10:24

3. ຜູ້ນຳຕ້ອງເສີມສ້າງຄວາມເປັນເອກະພາບ (ນ້ຳນຶ່ງໃຈດຽວ): ເພງສັນລະເສີນ 133:1

4. ຜູ້ນຳຕ້ອງເປັນ**<u>ຜູ້ສ້າງສັນຕິ</u>**ບໍ່ມັກການທະເລາະຜູ້ນຳບາງຄົນມີຄວາມສາມາດໃນການນຳ ແຕ່ມັກຈະມີຈຸດອ່ອນໃນ ດ້ານຄວາມສຳພັນກັບຄົນອື່ນ: 2 ຕີໂມທຽວ 2:24

5. ຜູ້ນຳຈະຕ້ອງ**<u>ອະທິບາຍ</u>** (ໃຫ້ຄວາມເຂົ້າໃຈ) ໂມເຊສໄດ້ສອນທຳບັນຍັດໃຫ້ອິດສະລາເອນ; ໂປໂລສອນພະ ອັດຈະນະໃຫ້ບັນດາສາວົກ (ຜູ້ຕິດຕາມ).

6. ຜູ້ນຳຈະຕ້ອງຮັບໃຊ້ໃນ**<u>ຖານະຕົວແທນ</u>** ຜູ້ນຳຈະຕ້ອງເປັນຕົວແທນຂອງຄຣິສຕະຈັກ ຫລື ຂອງອົງກອນ; ໂມເຊເປັນຕົວແທນຂອງປະຊາຊົນຕໍ່ພະເຈົ້າ. ອົບພະຍົບ 18:19

7. ຜູ້ນຳຕ້ອງມີ**<u>ຈຸດຢືນ</u>**ຂອງຕົນເອງ ແຕ່ຂະນະດຽວກັນກໍເປັນຄົນທີ່ມີຄວາມ**<u>ຢືດຫຍຸ່ນ</u>** ມີຜູ້ນຳຫລາຍຄົນທີ່ມີຈຸດຢືນແຕ່ບໍ່ມີຢືດຫຍຸ່ນ ຢ່າງເຊັ່ນ ຜູ້ນຳທີ່ຢຶດໝັ້ນ ໃນທາງກົດໝາຍອາດຈະເຮັດໃຫ້ສະມາຊິກຜິດຫວັງໃນ ລະຍະຍາວເຂົາອາດຈະມີຄວາມສຳເລັດໃນງານ ແຕ່ອາດຈະຂາດການຍອມຮັບຈາກສະມາຊິກ.

8. ຜູ້ນຳຄວນຈະສາມາດເລືອກ ແລະການ**<u>ຕັດສິນໃຈ</u>**ທີ່ດີ.
ການທີ່ບໍ່ຕັດສິນໃຈຫຍັງໝົດ ຈະເຮັດໃຫ້ລາວບໍ່ມີຜົນກະທົບໃນຄຣິສຕະຈັກ.

9. ຜູ້ນຳຕ້ອງເປັນຜູ້ທີ່ໜ້າ**<u>ໄວ້ວາງໃຈ</u>**ທັງໃນຄຳເວົ້າ ແລະການກະທຳ.
ຖ້າຜູ້ນຳສັນຍາບາງ ສິ່ງບາງຢ່າງ ແລະບໍ່ປະຕິບັດຕາມ ກໍຈະເຮັດໃຫ້ຄວາມໜ້າເຊື່ອຖືຂອງຜູ້ນຳຄົນນັ້ນໝົດ ໄປ ຜູ້ນຳເຊ່ນນີ້ຈະບໍ່ເກີດປະສິດທິພາບຫລືຄວາມສຳເລັດ.

10. ຜູ້ນຳຕ້ອງເປັນນັກ**<u>ການທູດ</u>** ໃນການປະເຊີນໜ້າ ແລະບໍ່ປະພຶດແບບໄປເລື້ອຍໆ.
ສະມາຊິກຄຣິສຕະຈັກຫລາຍຄົນຕ້ອງຜິດຫວັງກັບການປະສານງານກັບຜູ້ນຳຄຣິສຕະຈັກທີ່ບໍ່ກ້າວໜ້າ ເຮັດ ແບບໄປເລື້ອຍໆ.

11. ຜູ້ນຳຕ້ອງມີ**<u>ນິມິດ</u>**ດຽວກັນກັບຜູ້ນຳຄົນກ່ອນ ຫລືຜູ້ທີ່ຕິດຕາມຕົນເອງ

ຖ້າຜູ້ນຳມີທິດທາງທີ່ແຕກຕ່າງແມ່ນເຂົາຈະເປັນຜູ້ນຳທີ່ດີຢ່າງໃດ ເຂົາກໍຈະບໍ່ເປັນຜູ້ນຳ ທີ່ມີປະສິດທິພາບ

12. ຜູ້ນຳຕ້ອງເປັນຜູ້ທີ່ສາມາດຫາແນວທາງແກ້ໄຂໃນຍາມທີ່**<u>ສະຖານະການວິກິດ</u>**
ຜູ້ນຳຄວນຈະສາມາດນຳສະເໜີແນວທາງແກ້ໄຂແກ່ກຸ່ມຜູ້ນຳ ແລະມີທັກສະໃນການກະຕຸ້ນພວກເຂົາຫາຄຳ ຕອບແກ່ສະຖານະການເຫລົ່ານັ້ນ.

13. ຜູ້ນຳຕ້ອງ**<u>ວ່າກ່າວຕຳນິ</u>** ຫລືຕັກເຕືອນ ໃນກໍລະນີທີ່ຜູ້ໃຕ້ບັງຄັບບັນຊາມີພຶດຕິກຳບໍ່ເໝາະສົມ:
ສຸພາສິດ 27:5

14. ຜູ້ນຳຈະຕ້ອງຮັບຟັງ**<u>ຄຳວິຈານ</u>**: ສຸພາສິດ 1:5

15: ຜູ້ນຳຕ້ອງເປັນຜູ້ທີ່ໄດ້ຮັບ**<u>ການຍອມຮັບ</u>**ກ່ຽວກັບຄວາມຊື່ສັດທ່າມກາງຜູ້ຕິດຕາມ: ເຮັບເຣີ 14:5

GCI

16. ຜູ້ນຳຕ້ອງມີ**<u>ຄວາມຈົງຮັກພັກ</u>**ດີຕໍ່ອົງກອນ: ເຮັບເຣີ 13:8

17. ຜູ້ນຳຕ້ອງເປັນຜູ້ທີ່ໄດ້ຮັບ**<u>ການຍົກຍ້ອງ</u>**ໃນເລື່ອງຄວາມມີນ້ຳໃຈ: ເຮັບເຣີ 3:13

18. ຜູ້ນຳຈະຕ້ອງ**<u>ສື່ສານ</u>**ເປົ້າໝາຍຂອງຕົນເອງກັບສະມາຊິກຜູ້ຕິດຕາມ: ສຸພາສິດ14:5

19. ຜູ້ນຳຈະຕ້ອງ**<u>ແຈກຈ່າຍ</u>**ຄວາມຮັບຜິດຊອບແກ່ຄົນອື່ນ: ອົບພະຍົບ 18:17–23

**<u>ໜັງສືອ້າງອີງ</u>:**


1. Bill Gothard, *Institute in Basic Life Principles*.
2. John W. Gardner, *The Tasks of a Leader*.
3. Eugene B. Habecker, *The Other Side of Leadership,* (Illinois: Victor Books), 1989.
3. Frank Damazio, *The Making of a Leader* (Oregon: Bible Temple Publishing) 1988.